**ສາທາລະນະລັດປະຊາທິປະໄຕປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ສະມາຄົມນັກຂ່າວແຫ່ງ ສປປ ລາວ ເລກທີ 62 /ສຂລ

ນະຄອນຫຼວງວຽງຈັນ, ວັນທີ 15 ກັນຍາ 2023

# ຂໍ້ຕົກລົງແຕ່ງຕັ້ງ

- ອີງຕາມກົດໝາຍ ວ່າດ້ວຍສື່ມວນຊົນ ສະບັບ ເລກທີ 019/ສພຊ, ລົງວັນທີ 04 ພະຈິກ 2016 ກ່ຽວກັບສິດແລະ ໜ້າທີ່ຂອງສະມາຄົມນັກຂ່າວແຫ່ງ ສປປ ລາວ;
- ອີງຕາມ ຂໍ້ຕົກລົງຂອງຄະນະ ສະມາຄົມນັກຂ່າວແຫ່ງ ສປປ ລາວ ສະບັບເລກທີ 098/ຂສລ, ລົງວັນທີ 10 ເມສາ 2015;
- ອີງຕາມ ການຕົກລົງຂອງຄະນະປະທານສະມາຄົມນັກຂ່າວແຫ່ງ ສປປ ລາວ ຄັ້ງວັນທີ 14 ກັນຍາ 2023 ໃຫ້ແຕ່ງຕັ້ງຮອງຫົວໜ້າຫ້ອງການ ແລະ ພະນັກງານກອງເລຂາເພີ່ມເຕີມ ຍ້ອນພະນັກງານກອງເລຂາໄດ້ມີການຍົກຍ້າຍ, ສັບຊ້ອນໄປເຮັດວຽກບ່ອນອື່ນ ແລະ ບໍ່ໄດ້ມາເຄື່ອນໄຫວຢູ່ສະມາຄົມແລ້ວ.

**ປະທານ ສະມາຄົມນັກຂ່າວ ແຫ່ງ ສປປ ລາວ ຕົກລົງ:**

**ມາດຕາ 1** ແຕ່ງຕັ້ງພະນັກງານກອງເລຂາ, ຫ້ອງການ ແລະ ຄະນະພົວພັນຕ່າງປະເທດເພີ່ມຕືມເຊິ່ງປະກອບມີ:

1.ທ່ານ ບຸນທອງ ກອງມະນີ ຫົວໜ້າພະແນກໂຄສະນາແລະຈຳໜ່າຍ ໜັງສືພິມພາສາຕ່າງປະເທດ ເປັນ ຮອງຫົວໜ້າ ຫ້ອງການ ສະມາຄົມນັກຂ່າວ ແຫ່ງ ສປປ ລາວ;

2. ທ່ານ ເອກກະພອນ ພູທອນສີ ຫົວໜ້າພະແນກ ຂ່າວຕ່າງປະເທດ ໜັງສືພິມພາສາຕ່າງປະເທດ ເປັນ ພະນັກງານປະຈຳຄະນະກຳມາທິການ ພົວພັນຕ່າງປະເທດ ສະມາຄົມນັກຂ່າວ ແຫ່ງ ສປປ ລາວ;

3. ທ່ານ ໂອລຳ ຈັນທະວິໄລ ຫົວໜ້າ ຄຸ້ມຄອງບໍລິຫານ ວິທະຍຸກະຈາຍສຽງແຫ່ງຊາດລາວ ເປັນ ພະນັກງານປະຈຳຄະນະກຳມາທິການ ພົວພັນຕ່າງປະເທດ ສະມາຄົມນັກຂ່າວ ແຫ່ງ ສປປ ລາວ;

4. ນາງ ວັນສຸຂີ ທຳມະວົງ ຮອງຫົວໜ້າພະແນກ ຈັດໜ້າ, ອອກແບບ ແລະ ສຳເນົາ ໜັງສືພິມພາສາຕ່າງປະເທດ ເປັນ ພະນັກງານກອງເລຂາ ຮັບຜິດຊອບ ເຕັກນິກສະມາຄົມນັກຂ່າວ ແຫ່ງ ສປປ ລາວ;

5. ນາງ ຈັນສະໝອນ ໄຊປັນຍາ ຮອງຫົວໜ້າພະແນກ ບໍລິຫານ ໜັງສືພິມພາສາຕ່າງປະເທດ ເປັນພະນັກງານກອງເລຂາຮັບຜິດຊອບການເງິນສະມາຄົມນັກຂ່າວ ແຫ່ງ ສປປ ລາວ;

6. ນາງ ສຳລີ ສິງຫານາດ ວິຊາການ ພະແນກ ຈັດໜ້າ, ອອກແບບ ແລະ ສຳເນົາ ໜັງສືພິມພາສາຕ່າງປະເທດ ເປັນ ພະນັກງານກອງເລຂາ ຮັບຜິດຊອບເຕັກນິກສະມາຄົມນັກຂ່າວ ແຫ່ງ ສປປ ລາວ;

7. ນາງ ມະໂນລີ ແກ້ວດຸນບໍລິສັກ ພະນັກງານ ວິຊາການ ວິທະຍຸກະຈາຍສຽງແຫ່ງຊາດລາວ ເປັນພະນັກງານກອງເລຂາ ຮັບຜິດຊອບວຽກງານປະຊາສຳພັນສະມາຄົມນັກຂ່າວ ແຫ່ງ ສປປ ລາວ;

**ກອງເລຂາ ແລະ ຮອງຫົວໜ້າຫ້ອງການມີໜ້າທີ່:**

1. ຮອງຫົວໜ້າຫ້ອງການ ແມ່ນປະຕິບັດໜ້າທີ່ແທນໃນເວລາຫົວໜ້າຫ້ອງການບໍ່ຢູ່;
2. ພະນັກງານ ກອງເລຂາ ແລະ ພົວພັນຕ່າງປະເທດ ແມ່ນມີໜ້າທີ່ເຮັດວຽກລະບຽບຂອງສະມາຄົມ;
3. ປະຕິບັດວຽກງານອື່ນໆຕາມການມອບໝາຍຂອງຄະນະປະທານ;

**ມາດຕາ 2** ບັນດາທ່ານທີ່ໄດ້ຮັບການແຕ່ງຕັ້ງຈົ່ງຮັບຊາບ ແລະ ປະຕິບັດຕາມໜ້າທີ່ຂອງຕົນໃຫ້ໄດ້ຮັບຜົນດີ;

**ມາດຕາ 3** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນນີ້ເປັນຕົ້ນໄປ.

**ປະທານ**

ສະມາຄົມ
ບັກຂ່າວແຫ່ງ
ສປປ ລາວ

ສະຫວັນຄອນ ຣາຊມຸນຕີ